# ແຜນການຝຶກອົບຮົມ

## ແນະນຳພາບລວມຂອງບົດຮຽນ (ເວລາ 20 ນາທີ)

## ສອນສາທິດ (ເວລາ 150 ນາທີ)

### ກິດຈະກຳທີ 1  (ເວລາ 30 ນາທີ)

Icebreaking:

- ເພງແຕກຮັງ, ປາທູແຕະ

Group Discussion :

1) ໃຫ້ນັກສຶກສາເຂົ້າກຸ່ມຍ່ອຍ ຕາມຄວາມເໝາະສົມ
2) ຄູແນະນຳແຫຼ່ງຂໍ້ມູນສຳລັບກິດຈະກຳກຸ່ມ
3) ໃຫ້ນັກສຶກສາແຕ່ລະກຸ່ມ ສ້າງບົດນຳສະເໜີ ກ່ຽວກັບ ນິຍາມ, ຜົນປະໂຫຍດ, ປະເພດ ແລະ ຄຸນສົມບັດຂອງ LMS. (ຄຳຖາມແນະນຳ: LMS ແມ່ນຫຍັງ? ປະເພດຂອງ LMS ມີປະເພດໃດແດ່? LMS ມີຄຸນລັກສະນະແນວໃດແດ່? ການໃຊ້ LMS ມີຜົນປະໂຫຍດ ແລະ ສິ່ງທ້າທາຍຫຍັງແດ່?)
4) ໃຫ້ຕາງໜ້າກຸ່ມນຳສະເໜີ
5) ສົນທະນາ ແລະ ສະຫຼຸບຮ່ວມກັນ

### ກິດຈະກຳທີ 2  (ເວລາ 15 ນາທີ)

Task base :

1) ໃຫ້ນັກສຶກສາເຂົ້າກຸ່ມຍ່ອຍ
2) ໃຫ້ນັກສຶກສາ ແຕ່ລະກຸ່ມສຳຫຼວດ ແຫຼ່ງການຮຽນຮູ້ທີ່ເປັນ LMS ທີ່ຮູ້ຈັກ. (ຄຳຖາມແນະນຳ: LMS ມີອົງປະກອບໃດແດ່?)
3) ໃຫ້ຕາງໜ້າກຸ່ມນຳສະເໜີ
4) ສົນທະນາ ແລະ ສະຫຼຸບຮ່ວມກັນ

## ກິດຈະກຳທີ 3 (ເວລາ 60 ນາທີ)

Experiment/Project Based Learning :

1) ຄູນຳສະເໜີ ແພລດຟອມ ຕ່າງ ໆ ແລະ ວິທີການເລືອກໃຊ້ ແພລດຟອມ

2) ໃຫ້ນັກສຶກສາຄູເຂົ້າກຸ່ມຍ່ອຍ

3) ຄູຖາມ LMS ໃນແພລດຟອມ (Moodle, Google Classroom, Google Site, ) ມີປະສິດທິພາບທີ່ສຸດ

4) ໃຫ້ນັກສຶກສາແຕ່ລະກຸ່ມອອກແບບລະບົບການຮຽນ ຮູ້ ໃນລາຍວິຊາໃດໜຶ່ງ (1. ລະບົບການຈັດການຫຼັກສູດ/ຫ້ອງຮຽນ 2. ລະບົບຈັດການເນື້ອໃນບົດຮຽນ 3. ລະບົບຈັດການຜູ້ເຂົ້າໃຊ້ 4. ລະບົບວັດຜົນ ແລະ ການປະເມີນຜົນ 5. ລະບົບການສົ່ງເສີມຜູ້ຮຽນ 6. ລະບົບການຈັດການຂໍ້ມູນ)

5) ໃຫ້ນັກສຶກສາ ປະຕິບັດຕົວຈິງ ກັບແພລດຟອມ ທີ່ຕົນເອງເລືອກ (SLMS, Moodle, Google Classroom, Google Site, ) ແລ້ວໃຫ້ເພື່ອນເປັນຜູ້ເຂົ້າໃຊ້

## ກິດຈະກຳທີ 4 (ເວລາ 45 ນາທີ)

Task base :

1) ໃຫ້ນັກສຶກສາເຂົ້າກຸ່ມຍ່ອຍ
2) ໃຫ້ນັກສຶກສາ ວິເຄາະ ແລະ ປະເມີນ ແພລດຟອມ (ອີງຕາມເກນການປະເມີນທີ່ກຳນົດ)
3) ໃຫ້ຕາງໜ້າກຸ່ມນຳສະເໜີ
4) ສົນທະນາ ແລະ ສະຫຼູບຮ່ວມກັນ

## ສະທ້ອນຜົນ (ເວລາ 10 ນາທີ)